Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.
Tel/fax: 021 732 162 Mobile: 020 5526277
Email: leap@laoex.org
Email: cetdu@laoex.org

# ຂໍ້ແນະນຳ
# ເຕັກນິກການປູກໝາກເລັ່ນ



ເອກະສານ ປະກອບການຝຶກອົບຮົມ 20:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳ ແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂື້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເໜີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງໝາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຍອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 20 :
# ແນະນໍາເຕັກນິກການປູກໝາກເລັ່ນ

## ສາລະບານ

ໝາກເລັ່ນ (Tomato).......................................................................2
ລັກສະນະທົ່ວໄປ ........................................................................ 2
ພັນທີ່ໃຊ້ປູກ ...............................................................................3
ການກຽມດິນ..............................................................................4
ການປູກ .....................................................................................5
ການບົວລະບັດຮັກສາ ...................................................................6
ການເກັບກ່ຽວ ..............................................................................8

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້

ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

# ຂໍ້ແນະນຳເຕັກນິກການປູກໝາກເລັ່ນ



## ໝາກເລັ່ນ (Tomato)

ໝາກເລັ່ນ ເປັນພືດທີ່ນິຍົມປູກ ແລະບໍລິໂພກຫຼາຍ ໂດຍນຳໃຊ້ໝາກປະກອບເປັນອາຫານໄດ້ຫຼາຍຢ່າງ ຫຼືບໍລິໂພກສົດໂດຍກົງກໍໄດ້, ນອກຈາກນີ້ຍັງສາມາດນຳໃຊ້ເປັນວັດຖຸດິບປ້ອນໂຮງງານ ອຸດສາຫະກຳແປຮູບໄດ້ຫຼາຍສະນິດເຊັ່ນ: ເຮັດນ້ຳໝາກເລັ່ນ ໝາກເລັ່ນດອງ ແລະອື່ນໆ.

## ລັກສະນະທົ່ວໄປ

ໝາກເລັ່ນເປັນພືດໃນຕະກຸນ Solanaceae ມີຊື່ທາງວິທະຍາສາດວ່າ Lycopersicon esculentum Mill. ໝາກເລັ່ນສາມາດຈະເລີນເຕີບໂຕໄດ້ໃນດິນເກືອບທຸກຊະນິດ. ແຕ່ດິນທີ່ເໝາະສົມຄວນເປັນດິນຊາຍແກມຕົມ ຫຼືເປັນດິນທີ່ມີອິນຊີວັດຖຸສູງ ມີການລະບາຍນ້ຳດີ ປະຕິກິຣິຍາຂອງດິນ (pH) 6.5 ຫາ 6.8. ເປັນພືດມັກແສງ ເພາະສະນັ້ນ ໃນຊ່ວງໄລຍະການຈະ

ເລີນເຕີບໂຕ ຄວນໄດ້ຮັບແສງແດດຕະຫຼອດມື້ລະດູທີ່ເໝາະສົມທີ່ສຸດສຳລັບການຈະເລີນເຕີບໂຕຂອງໝາກເລັ່ນແມ່ນລະດູໜາວ ອຸ່ນຫະພູມຂອງອາກາດທີ່ເໝາະສົມລະຫວ່າງ 15 ຫາ 25°C ຊຶ່ງຈະເຮັດໃຫ້ໝາກເລັ່ນແຂງແຮງຕິດໝາກດົກດີ. ການປູກໝາກເລັ່ນໃນລະດູຝົນມີບັນຫາຫຼາຍ ເນື່ອງຈາກຄວາມຊຸ່ມຂອງອາກາດ ແລະອຸ່ນຫະພູມທີ່ສູງເຮັດໃຫ້ໝາກເລັ່ນມີຜົນຜະລິດຕ່ຳມັກເກີດພະຍາດຕ່າງໆ ໂດຍສະເພາະແມ່ນພະຍາດຫ່ຽວຍຸບ. ແມງໄມ້ສັດຕູພືດທຳລາຍສ່ວນຫຼາຍແມ່ນບົ້ງເຈາະໝາກ. ຖ້າຈຳເປັນຕ້ອງປູກຄວນເລືອກພັນທີ່ເໝາະສົມ ແລະມີການບົວລະບັດເປັນຢ່າງດີ.

## ແນວພັນທີ່ໃຊ້ປູກ

ໝາກເລັ່ນທີ່ໃຊ້ປູກໃນບ້ານເຮົາ ແບ່ງອອກເປັນ 2 ປະເພດຄື:

- **ພັນສຳລັບປູກຂາຍຕະຫຼາດສົດ ແບ່ງເປັນ 2 ຊະນິດ**
  - **ພັນໝາກໃຫຍ່:** ພັນນີ້ນິຍົມໃຊ້ເຮັດສະຫຼັດ ແລະ ປະດັບຈານອາຫານ ເຮັດໃຫ້ໜ້າຮັບປະທານມີລັກສະນະໝາກໃຫຍ່ກົມແພບ ໝາກອ່ອນມີສີຂຽວ ເວລາສຸກແດງເຂັ້ມ ກິນແຊບ ຊີ້ນໜາ ເປືອກບໍ່ໜຽວເຊັ່ນ ພັນ: ຟໍລາແດນ, ພັນມັດສະເຕີ 3 ແລະອື່ນໆ.
  - **ພັນໝາກນ້ອຍ:** ໝາກເລັ່ນພັນນີ້ ມີໝາກນ້ອຍສີຊົມພູ ຫຼືສີແດງລົດຊາດສົ້ມສ່ວນຫຼາຍແມ່ນພັນພື້ນເມືອງ ຫຼືພັນປັບປຸງລູກປະສົມເປີດທີ່ສາມາດປັບຕົວເຂົ້າກັບສະພາບແວດລ້ອມໄດ້ດີປູກໄດ້ທຸກລະດູການແຕ່ຄວາມນິຍົມຂອງທ້ອງຕະຫຼາດຕ່ຳ.
  - **ພັນສຳລັບປ້ອນໂຮງງານອຸດສາຫະກຳ:** ພັນສະນິດນີ້ເປັນພັນທີ່ສຸກ



## ການເກັບກ່ຽວ

ໝາກເລັ່ນແຕ່ລະພັນ ມີອາຍຸການເກັບກ່ຽວແຕກຕ່າງກັນ. ໂດຍທົ່ວໄປແລ້ວ ໝາກເລັ່ນຈະສຸກແກ່ເປັນເກັບກ່ຽວໄດ້ເມື່ອອາຍຸປະມານ 80 ຫາ 90 ວັນ ຫຼັງຈາກຍ້າຍປູກ. ຖ້າປູກໝາກເລັ່ນເພື່ອສົ່ງຕະຫຼາດປະເພດໝາກສົດຄວນເລືອກໝາກທີ່ປ່ຽນສີຈາກຂຽວເປັນສີຊົມພູບໍ່ຄວນ ປ່ອຍໄວ້ຈົນເປັນສີແດງສຸກຄາຕົ້ນເພາະຈະເຮັດໃຫ້ມີບັນຫາໃນການຂົນສົ່ງ ແລະເສຍຄຸນນະພາບເວລາເຖິງຈຸດໝາຍຈຳໜ່າຍ. ການເກັບໝາກເລັ່ນນີ້ສາມາດເກັບໄດ້ຫຼາຍເທື່ອ ຕິດຕໍ່ກັນໄດ້ເຖິງ 30 ວັນ.

## ການພວນດິນກຳຈັດຫຍ້າ

ຄວນເຮັດໃນໄລຍະທຳອິດ ເພື່ອເຮັດໃຫ້ດິນລຸລ່ວງຜຸຜົງລະບາຍອາກາດ ແລະນ້ຳໄດ້ດີພ້ອມກັບການກຳຈັດຫຍ້າໄປພ້ອມໆກັນ. ເມື່ອຕົ້ນພືດມີໃບປົກຄຸມດິນແລ້ວບໍ່ຈຳເປັນເຮັດເລີຍ.

## ການປັກຄ້າງ

ໝາກເລັ່ນພັນຝຸ່ມ ຖ້າຫາກປູກໃນລະດູແລ້ງແມ່ນບໍ່ຈຳເປັນປັກຄ້າງຖ້າປູກລະດູຝົນແມ່ນຈຳເປັນປັກຄັ້ງ. ແຕ່ວ່າໝາກເລັ່ນພັນເລືອ ຈຳເປັນຕອ້ງມີການປັກຄ້າງທັງແລ້ງ ແລະຝົນ ໂດຍໃຊ້ໄມ້ໄຜ່ກົມ ຫຼືໄມ້ອື່ນໆທີ່ຫາໄດ້ງ່າຍລາຄາຖືກ ຍາວປະມານ 1.50 ແມັດ. ປັກໃຫ້ແລິກພໍສົມຄວນຮັບປະກັນບໍ່ໃຫ້ລົ້ມເວລາໝາກເລັ່ນຕິດໝາກ. ປັກຕາມແຖວລະຫວ່າງຕົ້ນໝາກເລັ່ນເບື້ອງໃນ ເອ່ນປາຍເຂົ້າຫາກັນວາງໄມ້ພາດຂື້ນອີກ 3 ຫາ 4 ອັນເປັນຮາວແລ້ວມັດເຊືອກໃຫ້ແໜ້ນ. ການປັກຄ້າງຕ້ອງປັກເວລາຕົ້ນໝາກເລັ່ນເລືອ ຫຼືອາຍຸປະມານ 10 ຫາ 15 ວັນ ຫຼັງຍ້າຍປູກ. ເມື່ອໝາກເລັ່ນ ມີອາຍຸໄດ້ປະມານ 3 ອາທິດຫຼັງຈາກຍ້າຍປູກ ຈະເລີ່ມມີກິ່ງງ່າຫຼາຍຂື້ນຕ້ອງຕັດອອກໃຫ້ເຫຼືອພຽງ 3 ກິ່ງງ່າ ມັດກິ່ງງ່າໝາກ ເລັ່ນໃຫ້ກະຈາຍອອກໄປຕາມຮາວ ສະເລ່ຍໃຫ້ໄລຍະຫ່າງກັນພໍສົມຄວນ ກິ່ງງ່າບໍ່ເປັນປະໂຫຍດຕ້ອງຕັດອອກການມັດກິ່ງງ່າຕາມຮາວຄວນເຮັດເລື້ອຍໆ ທຸກ 5 ຫາ 7 ວັນ.



ພ້ອມກັບເປັນສ່ວນໃຫຍ່ ໝາກສຸກມີສີແດງເຂັ້ມ ຊີ້ນຫຼາຍ ນ້ຳໜ້ອຍປະລິມານກົດສູງ ເປືອກໜາ ແລະໜຽວສາມາດນຳສົ່ງໄດ້ໃນໄລຍະທາງໄກເກັບໄວ້ໄດ້ດົນ ໂດຍບໍ່ເນົ່າເສຍຫາຍງ່າຍເໝາະສຳລັບສົ່ງໂຮງງານອຸດສາຫະກຳເຊັ່ນ: ພັນໂລມາວີເອບ, ພັນວີເອບ 134_1_2 ແລະອື່ນໆ (ສ່ວນຫຼາຍເປັນພັນລູກປະສົມປົດ).

# ການຕຽມດິນ

## ການຕຽມໜານກ້າ

ໃຫ້ຂຸດໄຖດິນເລິກປະມານ 20 ຊຕມ. ຕາກດິນໄວ້ 5 ຫາ 7 ວັນ. ຈາກນັ້ນໃຫ້ໂຮຍຝຸ່ນບົ່ມ ຫຼືຝຸ່ນຄອກທຸບ ແລະພວນດິນໃຫ້ລະອຽດຍົກເປັນໜານ.

## ການຕຽມໜານປູກ

ເນື່ອງຈາກໝາກເລັ່ນ ເປັນພືດທີ່ລະບົບຮາກເລິກຄວນຂຸດ_ໄຖດິນເລິກປະມານ 30 ຫາ 40 ຊຕມ. ຕາກດິນໄວ້ 7 ຫາ10 ວັນ, ໃສ່ຝຸ່ນຄອກ ຫຼືຝຸ່ນບົ່ມໃຫ້ຫຼາຍ ເພື່ອປັບປຸງສະພາບດິນໃຫ້ດີມີອິນຊີວັດຖຸສູງມີການລະບາຍນ້ຳໄດ້ດີ. ຫຼັງຈາກນັ້ນໃຫ້ຍ່ອຍ ແລະພວນດິນໃຫ້ມີຂະໜາດນ້ອຍເກັບເສດໄມ້ ແລະເສດຫຍ້າອອກຖ້າດິນເປັນກົດຫຼາຍໃຫ້ຫວ່ານປູນຂາວລົງໃນໜານກ່ອນປູກ 2 ຫາ 3 ອາທິດ ຄົນເຂົ້າກັນໃຫ້ທົ່ວ.

# ການປູກ

## ການກ້າແກ່ນ

ຫຼັງຈາກຕຽມໜານກ້າແລ້ວ ໃຫ້ເຮັດຮ່ອງເປັນແຖວໆ ເລິກປະມານ 1 ຊຕມ. ຫ່າງກັນແຖວລະ 10 ຊຕມ. ໂຮຍເມັດລົງຕາມຮ່ອງແລ້ວກົບດ້ວຍຝຸ່ນຄອກ ຫຼືຝຸ່ນບົ່ມ ຫຼືດິນລະອຽດປົກດ້ວຍເຟືອງ ຫຼືຫຍ້າແຫ້ງຫົດນ້ຳໃຫ້ຊຸ່ມ. ຫຼັງຈາກເມັດງອກເປັນຕົ້ນເບ້ຍປະມານ 10 ວັນ ບ່ອນໃດມີຕົ້ນເບ້ຍໜາແໜ້ນໃຫ້ຖອນແຍກອອກໃຫ້ເຫຼືອ ຫ່າງກັນຕົ້ນລະປະມານ 2 ຫາ 3 ຊຕມ ເມື່ອອາຍຸໄດ້ 25 ຫາ 30 ວັນ ຕົ້ນເບ້ຍຈະໃຫຍ່ສູງ 12 ຫາ 13 ຊຕມ ໂດຍແມ່ນມີໃບແທ້ 3 ຫາ 4 ໃບ ກໍແຍກເອົາໄປປູກໄດ້ ຄວນເລືອກຕົ້ນທີ່ງາມ ແລະບໍ່ຄວນໃຊ້ເບ້ຍທີ່ມີອາຍຸເກີນ 35 ວັນ ປູກເພາະຈະແກ່ເກີນໄປຄວນຍ້າຍໃນຕອນບ່າຍທີ່ມີອາກາດເຢັນຊ່ວງທີ່ຟ້າບົດ ການຖອນເບ້ຍຄວນໃຫ້ມີດິນຕິດຮາກນຳ.

## ການປູກ

ຫຼັງຈາກຫຼົກ ຫຼືຍ້າຍເບ້ຍແລ້ວໃຫ້ປູກທັນທີ ກ່ອນປູກຕັດໃບແທ້ 2 ໃບທຳອິດອອກ ເພື່ອໃຫ້ຕົ້ນເບ້ຍໄດ້ຕັ້ງໂຕໄວ ຕັ້ງເບ້ຍໃຫ້ຊື່ຖົມດິນຮອບຕົ້ນໃຫ້ແໜ້ນ ແລ້ວຫົດນ້ຳໃຫ້ຊຸ່ມໃຊ້ເຈ້ຍ ຫຼືໃບຕອງບັງແດດໃນໄລຍະ 3 ຫາ 4 ວັນ.



# ການບົວລະບັດຮັກສາ

## ການໃສ່ຝຸ່ນ

ໝາກເລັ່ນເປັນພືດຕ້ອງການຝຸ່ນພໍສົມຄວນ. ດັ່ງນັ້ນ, ການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງ ແນໃສ່ການລຸດຕົ້ນທຶນການຜະລິດ ແລະ ໃຫ້ມີປະສິດທິຜົນສູງ ທາງດ້ານການຈະເລີນເຕີບໂຕ ການອອກດອກ ແລະຈັບໝາກ. ດັ່ງນັ້ນ, ຈຶ່ງແນະນຳໃຫ້ໃຊ້ ຝຸ່ນເຄມີສູດ 15_15_15, 12_24_12 ຫຼື ສູດທີ່ໃກ້ຄຽງກັນນີ້ ໃນຈຳນວນ 300 ຫາ 600 ກິໂລ/ເຮັກຕາ ໂດຍແບ່ງໃສ່ 3 ເທື່ອ: ເທື່ອທີ່1: ໃສ່ເຄິ່ງນຶ່ງ ເປັນຝຸ່ນຮອງພື້ນຕອນປູກ ແລ້ວພວນດິນປົກ. ເທື່ອທີ່2: ໃຫ້ໃສ່ເມື່ອພືດມີອາຍຸປະມານ 10 ຫາ 15 ວັນ ຈຳນວນເຄິ່ງນຶ່ງ ຈາກສ່ວນທີ່ເຫຼືອຄັ້ງທຳອິດ ພ້ອມນີ້ອາດຈະເພີ່ມຝຸ່ນຢູເຣັຍ ອີກ 25 ຫາ 30 ກລ/ຮຕ ເພື່ອເລັ່ງການຈະເລີນເຕີບໂຕລຳຕົ້ນ ແລະໃບ. ເທື່ອທີ່ 3 ໃສ່ເມື່ອ ອາຍຸໄດ້ 25 ຫາ 30 ວັນ ຈາກສ່ວນທີ່ເຫຼືອທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນນັ້ນ.

## ການໃຫ້ນ້ຳ

ຄວນໃຫ້ພຽງພໍ ແຕ່ຢ່າໃຫ້ປຽກເກີນໄປໃຫ້ເບິ່ງຄວາມຊຸ່ມຊື່ນ ໃນໜານປູກ.